ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ແລະ ທປທ ແລກປ່ຽນບົດຮຽນການສ້າງມາດຕະຖານ QR Code



ໃນຕອນເຊົ້າຂອງວັນທີ 21 ມິຖຸນາ 2019 ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງປະເທດໄທ (ທປທ) ໄດ້ຈັດສຳມະນາໃນຫົວຂໍ້ "ບົດຮຽນການສ້າງມາດຕະຖານ QR Code" ເຊິ່ງໃຫ້ກຽດກ່າວເປີດໂດຍທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ. ພ້ອມນີ້, ກໍ່ມີຜູ້ຕາງໜ້າຈາກ ທປທ ແລະ ວິຊາການຈາກບັນດາກົມພາຍໃນ ທຫລ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ການສຳມະນາເທື່ອນີ້ໄດ້ມີຊ່ຽວຊານຈາກ ທປທ, ບໍລິສັດ ITMX, ທະນາຄານກະສິກອນໄທ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງກັບການສ້າງມາດຕະຖານ QR Code ຢູ່ປະເທດໄທທີ່ມາຖ່າຍທອດ ຄວາມຮູ້ແກ່ຜູ້ເຂົ້າຮ່ວມ. ການສຳມະນາໃນເທື່ອນີ້ ຖືເປັນວາລະສຳຄັນ ເນື່ອງຈາກວ່າ ການສ້າງມາດຕະຖານ QR Code ຈະສາມາດເກີດຂຶ້ນໄດ້ກໍ່ຕໍ່ເມື່ອໄດ້ຮັບການຮ່ວມມືຢ່າງໃກ້ຊິດຕິດແທດຈາກບັນດາພາກສ່ວນທີ່ກ່ຽວຂ້ອງ. ການພັດທະນາມາດຕະຖານ QR Code ຍັງເປັນການຊ່ວຍສ້າງຊ່ອງທາງໃນການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານໃຫ້ແກ່ລັດຖະບານ. ສະນັ້ນ, ນອກຈາກຂະແໜງການທະນາຄານແລ້ວ ເຮົາຍັງໄດ້ມີສ່ວນທີ່ກ່ຽວຂ້ອງມາຮ່ວມສຳມະນາ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບການສ້າງມາດຕະຖານ QR Code ຮ່ວມກັນ.




ທ່ານນາງ ວັດທະນາ ດາລາລອຍ ໄດ້ກ່າວວ່າ: ເພື່ອເປັນການສືບຕໍ່ການຮ່ວມມືຈາກບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ທຫລ ແລະ ທປທ ໃນເດືອນ ເມສາ 2019 ທີ່ຜ່ານມາ, ທຫລ ໃນນາມຜູ້ຮັບຜິດຊອບຕົ້ນຕໍໃນການຄົ້ນຄວ້າສ້າງມາດຕະຖານ QR Code ໄດ້ຂຶ້ນແຜນການເຮັດວຽກ ໂດຍ ທປທ ແລະ ພາກສ່ວນກ່ຽວຂ້ອງມາຈັດການສຳມະນາໃຫ້ຄວາມຮູ້ແກ່ຄະນະຮັບຜິດຊອບ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຖອດຖອນບົດຮຽນການສ້າງມາດຕະຖານ QR Code ໃຫ້ມີຄວາມເປັນເອກະພາບກັນຕໍ່ວຽກງານດັ່ງກ່າວ ເຊິ່ງກ່ອນການສຳມະນາໃນ ທຫລ ໄດ້ປະຊຸມຮ່ວມກັບບັນດາທະນາຄານທຸລະກິດທີ່ໃຫ້ບໍລິການຊຳລະຜ່ານ QR Code ເພື່ອປຶກສາຫາລື ແລະ ຕີລາຄາສະພາບການພັດທະນາ QR Code ຂອງ ສປປ ລາວ ໃນປະຈຸບັນ.

# ຂ່າວ-ພາບ: ສີມອິກ ເຄນຄຳແພງ.